ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 1999/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 12 ຕຸລາ 2017

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017

- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝວິສາມັນຄັ້ງທີ 3/2017 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ວັນທີ 23 ກັນຍາ 2017;

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("**ບໍລິສັດ**") ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1/2017 ໃນວັນທີ **25 ຕຸລາ 2017 ເວລາ 15:00 ໂມງ** (ລົງທະບຽນເວລາ **13:30**ໂມງເປັນຕົ້ນໄປ), ທີ່ ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງ ກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017 ຜ່ານເວັບໄຊທ໌ ຂອງ ບໍລິສັດ (www.edlgen.com.la) ແລະ ລະບົບຂໍ້ມູນຂ່າວສານ ຂອງ ຕະຫຼາດ ຫຼັກຊັບລາວ (www.lsx.com.la).

ບໍລິສັດໄດ້ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດລາຍຊື່ຂອງຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມກອງປະຊຸມ ວິສາມັນຜູ້ຖືຮຸ້ນຄັ້ງທີ 1/2017, ໃນວັນທີ 11 **ຕຸລາ 2017**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖື,
ຮອງປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL Generation Public Company

ບຸນອຸ້ມ ສີວັນເພັງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

<u>ເອກະສານຄັດຕິດ:</u>

1. ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017.
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016.
3. ໃບມອບສັນທະ.
4. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມວິສາມັນຜູ້ຖືຮຸ້ນ.
5. ແຜນທີ່ ຂອງ ສະຖານທີ່ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017.

<u>ໝາຍເຫດ</u>:

1. ຜູ້ຖືຮຸ້ນທຸກໆທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມແຕ່ວັນທີ **13 ຕຸລາ 2017**, ຢູ່ທີ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: (856-21) 454361-4, ແຟັກ: (856-21) 454361-4.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະຕາມ **<u>ເອກະສານຄັດຕິດ 3</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ ຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 4</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ກຳມະການອິດສະຫລະ ຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ແລະ ໝາຍ (✔) ເພື່ອເລືອກເອົາກຳມະການອິດສະຫລະ ຂອງ ບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວພ້ອມເອກະສານປະກອບສົ່ງເຖິງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຊັ້ນ 7, **ພະແນກເລຂານຸການບໍລິສັດ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392. ແລະ**ກະລຸນາສົ່ງເຖິງບໍລິສັດ ກ່ອນວັນທີ 25 ຕຸລາ 2017**.
6. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ກະລຸນາສອບຖາມ ທ່ານ ນາງ ໂພຄົນ ອັບໄພ ໂທ: (856-20) 545 49978 ຫລື ທ່ານ ບຸນເກີດ ໄຊຍະສອນ ໂທ: (856-20) 222 48202 ໃນໂມງລັດຖະການ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016.

ລາຍລະອຽດ:

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016 ໄດ້ຈັດຂຶ້ນໃນວັນທີ 6 ເມສາ 2017, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາວິມັນຜູ້ຖືຮຸ້ນພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016, ວັນທີ 6 ເມສາ 2017.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2. ພິຈາລະນາ ແລະອະນຸມັດການຮັບໂອນຮຸ້ນສາມັນ 20 ສ່ວນຮ້ອຍ ຂອງບໍລິສັດໄຟຟ້າດອນສະໂຮງ ຈຳກັດ ແລະຮຸ້ນສາມັນ 20 ສ່ວນຮ້ອຍ ຂອງ ບໍລິສັດໄຊຍະບູລີ ພາວເວີ ຈຳກັດ, ໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ຈາກລັດວິສາຫະກິດໄຟຟ້າລາວ.

ລາຍລະອຽດ:

ເພື່ອສືບຕໍ່ຂະຫຍາຍການລົງທຶນ ແລະ ການດຳເນີນທຸລະກິດ ຂອງ ບໍລິສັດໃຫ້ເຕີບໃຫຍ່ຂຶ້ນເທື່ອລະກ້າວ ແນໃສ່ສ້າງລາຍຮັບໃຫ້ແກ່ຜູ້ຖືຮຸ້ນຢ່າງຕໍ່ເນື່ອງ ແລະ ນັບມື້ນັບເພີ່ມຂຶ້ນ, ບໍລິສັດ ສະເໜີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດການຮັບໂອນຮຸ້ນສາມັນ ໃນບໍລິສັດຜະລິດໄຟຟ້າເອກະລາດ ຈາກລັດວິສາຫະກິດໄຟຟ້າລາວ (ຟຟລ), ມີລາຍລະອຽດ ດັ່ງນີ້:

(1) ໂຄງການເຂື່ອນໄຟຟ້າໄຊຍະບູລີ: ຕັ້ງຢູ່ແຂວງ ໄຊຍະບູລີ, ມີກຳລັງຕິດຕັ້ງທັງໝົດເທົ່າກັບ 1.285 MW, ລັດວິສາຫະກິດໄຟຟ້າລາວ (ຟຟລ) ຖືຮຸ້ນ 20 ສ່ວນຮ້ອຍ ເທົ່າກັບ 257 MW, ຄາດວ່າໂຄງການນີ້ຈະເລີ້ມດຳເນີນການຜະລິດຢ່າງເປັນທາງການ ໃນປີ 2019. ມູນຄ່າໃນການຮັບໂອນເປັນເງິນສົດຈຳນວນບໍ່ເກີນປະມານ 378 ລ້ານໂດລາສະຫະລັດ

(2) ໂຄງການເຂື່ອນໄຟຟ້າດອນສະໂຮງ: ຕັ້ງຢູ່ແຂວງຈຳປາສັກ, ມີກຳລັງຕິດຕັ້ງ 260 MW, ລັດວິສາຫະກິດໄຟຟ້າລາວ (ຟຟລ) 20 ສ່ວນຮ້ອຍ ເທົ່າກັບ 52 MW, ຄາດວ່າໂຄງການນີ້ຈະເລີ້ມດຳເນີນການຜະລິດຢ່າງເປັນທາງການ ໃນປີ 2019. ມູນຄ່າໃນການຮັບໂອນເປັນເງິນສົດຈຳນວນບໍ່ເກີນປະມານ 72 ລ້ານໂດລາສະຫະລັດ.

ເຖິງຢ່າງໃດກໍຕາມ, ການໂອນຮຸ້ນໃນ (1) ບໍລິສັດ ໄຟຟ້າໄຊຍະບູລີ ພາວເວີ ຈຳກັດ, (2) ບໍລິສັດ ໄຟຟ້າດອນສາໂຮງ ຈຳກັດ ໂດຍ ຟຟລ ແລະ ການຮັບໂອນຮຸ້ນດັ່ງກ່າວໂດຍ ບໍລິສັດ ຈະເກີດຂຶ້ນກໍ່ຕໍ່ເມື່ອຄູ່ສັນຍາໄດ້ປະຕິບັດຕາມເງື່ອນໄຂຕາມທີ່ຄູ່ສັນຍາກຳນົດໄວ້ ໃນບົດບັນທຶກຄວາມເຂົ້າໃຈເພື່ອການໂອນຮຸ້ນ (Memorandum

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

of Understanding for Share Transfer) ລົງວັນທີ 21 ກໍລະກົດ 2017 ("**ບົດບັນທຶກຄວາມເຂົ້າໃຈ**") ໄດ້ສຳເລັດຄົບຖ້ວນແລ້ວ ຊຶ່ງລວມເຖິງເງື່ອນໄຂທີ່ສຳຄັນດັ່ງນີ້:

1) ຄູ່ສັນຍາແຕ່ລະຝ່າຍ ໄດ້ຮັບການອະນຸມັດທີ່ຈຳເປັນທັງໝົດຈາກສະພາບໍລິຫານ ເພື່ອໃຫ້ສາມາດໂອນ ຫຼື ຮັບໂອນຮຸ້ນທີ່ຈະໂອນຕາມຂໍ້ກຳນົດຂອງບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນຮຸ້ນ (Share Transfer Agreement);
2) ຄູ່ສັນຍາແຕ່ລະຝ່າຍໄດ້ຮັບຄວາມຍິນຍອມ ຫຼື ການອະນຸມັດທີ່ຈຳເປັນທັງໝົດຈາກໜ່ວຍງານລັດ ເພື່ອໃຫ້ສາມາດໂອນ ຫຼື ຮັບໂອນຮຸ້ນທີ່ຈະໂອນຕາມຂໍ້ກຳນົດຂອງບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນຮຸ້ນ (Share Transfer Agreement);
3) ຟຟລ ໄດ້ຮັບຄວາມຍິນຍອມ ຫຼື ການອະນຸມັດທີ່ຈຳເປັນທັງໝົດຈາກບັນດາບຸກຄົນອື່ນທີ່ກ່ຽວຂ້ອງ, ເຊິ່ງລວມເຖິງຜູ້ຖືຮຸ້ນລາຍອື່ນໃນ (1) ບໍລິສັດ ໄຊຍະບູລີ ພາວເວີ ຈຳກັດ, (2) ບໍລິສັດ ໄຟຟ້າ ດອນສາໂຮງ ຈຳກັດ ແລະ ເຈົ້າໜີ້ທັ້ງຫຼາຍ (ຖ້າມີ) ເພື່ອໃຫ້ສາມາດໂອນຮຸ້ນທີ່ຈະໂອນຕາມຂໍ້ກຳນົດຂອງບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນຮຸ້ນ (Share Transfer Agreement); ແລະ
4) ບໍລິສັດ ໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນຕາມທີ່ຈຳເປັນເພື່ອໃຫ້ສາມາດຮັບໂອນຮຸ້ນທີ່ຈະໂອນຕາມຂໍ້ກຳນົດ ຂອງ ບົດບັນທຶກຄວາມເຂົ້າໃຈ ແລະ ສັນຍາໂອນຮຸ້ນ (Share Transfer Agreement).

ແລະ ສະເໜີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2017 ມອບອຳນາດໃຫ້ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການຕິດຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ລາຄາຊື້ຂາຍ ແລະລາຍລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ້ມເຕີມ, ຕີກລົງ, ເຂົ້າເຮັດ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການເຂົ້າຊື້ຮຸ້ນດັ່ງກ່າວຂ້າງເທິງນີ້ກັບ ຟຟລ ແລະ/ຫຼື ບຸກຄົນທີ່ກ່ຽວຂ້ອງກັບການເຂົ້າຊື້ຮຸ້ນດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາໂອນຮຸ້ນ (Share Transfer Agreement) ແລະ ສັນຍາຮ່ວມຮຸ້ນ (Shareholders Agreement) ລວມເຖິງແຕ່ບໍ່ຈຳກັດພຽງ ການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດຈົນການກະກຽມ, ດັດແກ້, ເພີ້ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການດັ່ງກ່າວໄດ້ທຸກຢ່າງຈົນສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອຳນາດຕໍ່ໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້ທຸກປະການ.

ທັງນີ້ ການໂອນຮຸ້ນໃນ 2 ໂຄງການເຂື່ອນໄຟຟ້າດັ່ງກ່າວ ຈະເກີດຂຶ້ນກໍ່ຕໍ່ເມື່ອກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2017 ຂອງບໍລິສັດພິຈາລະນາອະນຸມັດ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດການຮັບໂອນຮຸ້ນສາມັນໃນສອງໂຄງການດັ່ງກ່າວຂ້າງເທິງ ຈາກ ຟຟລ ແລະ ການມອບອຳນາດດັ່ງກ່າວຂ້າງເທິງທຸກປະການ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ (80%) ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ວາລະທີ 3. ພິຈາລະນາ ແລະອະນຸມັດ ການຊອກຫາແຫລ່ງທຶນ ເພື່ອຊື້ຮຸ້ນໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ຈາກ ລັດວິສາຫະກິດໄຟຟ້າລາວ;

<u>ລາຍລະອຽດ:</u>

ໂດຍອີງຕາມເປົ້າໝາຍຂອງບໍລິສັດ ຄື ການດຳເນີນທຸລະກິດໃຫ້ນັບມື້ນັບເຕີບໃຫຍ່ ແລະສ້າງຄວາມ ຮັ່ງມີໃຫ້ຜູ້ຖືຮຸ້ນ, ດັ່ງນັ້ນ ບໍລິສັດເຫັນສົມຄວນສະເໜີ ກອງປະຊຸມພິຈາລະນາອະນຸມັດແຜນການກູ້ຢືມເງິນຈາກສະຖາ ບັນການເງິນ ແລະ/ຫລືການອອກ ແລະຈຳໜ່າຍຮຸ້ນກູ້, ເພື່ອຮັບໂອນຮຸ້ນສາມັນໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ແລະ/ຫຼື ລົງທຶນໃນກິດຈະການທີ່ກ່ຽວຂ້ອງ, ຊຶ່ງມີລາຍລະອຽດດັ່ງນີ້:

ຈຸດປະສົງ: ເພື່ອລົງທຶນໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ເປັນຕົ້ນ ໂຄງການເຂື່ອນໄຟຟ້າດອນສະ ໂຮງ ແລະ ໂຄງການເຂື່ອນໄຟຟ້າໄຊຍະບູລີ ແລະ/ຫຼື ລົງທຶນໃນກິດຈະການທີ່ກ່ຽວຂ້ອງ.

ຈຳນວນເງິນ: ຈຳນວນເງິນບໍ່ເກີນປະມານ 550 ລ້ານໂດລາສະຫະລັດ.

ອັດຕາດອກເບ້ຍ: ອັດຕາທີ່ເໝາະສົມຂຶ້ນຢູ່ກັບຜົນການຈັດອັນດັບຄວາມໜ້າເຊື່ອຖືຂອງບໍລິສັດ ແລະ ສະພາ ວະຕະຫຼາດໃນຂະນະທີ່ກູ້ຢືມເງິນ ແລະ/ຫລືການອອກ ແລະສະເໜີຂາຍຮຸ້ນກູ້ໃນແຕ່ລະ ຄັ້ງ.

ໄລຍະເວລາການກູ້ຢືມເງິນ ແລະອາຍຸຂອງຮຸ້ນກູ້: ຕາມແຜນການນຳໃຊ້ທຶນ ແລະສະພາບຂອງຕະຫລາດ ໃນຂະນະທີ່ຈະກູ້ຢືມ ແລະ/ຫລືໄລຍະເວລາທີ່ສະເໜີຂາຍຮຸ້ນກູ້.

ການສະເໜີຂາຍ: ສະເໜີຂາຍຮຸ້ນກູ້ໃນຄັ້ງດຽວເຕັມຈຳນວນເງິນ ໂດຍສະເໜີຂາຍຢູ່ຕ່າງປະເທດ ໃຫ້ແກ່ຜູ້ ລົງທຶນທົ່ວໄປ ແລະ/ຫຼື ສະເໜີຂາຍໃຫ້ແກ່ນັກລົງທຶນໂດຍສະເພາະເຈາະຈົງ ແລະ/ຫຼື ສະ ເໜີຂາຍແກ່ນັກລົງທຶນລາຍໃຫຍ່ ແລະ/ຫຼື ຜູ້ລົງທຶນສະຖາບັນໃນຕ່າງປະເທດ, ໂດຍ ປະຕິບັດຕາມກົດລະບຽບທີ່ກ່ຽວຂ້ອງ ແລະມີຜົນບັງຄັບໃນເວລາທີ່ອອກ ແລະສະເໜີຂາຍ ຮຸ້ນກູ້.

ແລະສະເໜີກອງປະຊຸມວິສາມັນຜູ້ຖືຮຸ້ນມອບອຳນາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫລື ຜູ້ທີ່ໄດ້ ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະດຳເນີນວຽກງານ ກ່ຽວກັບການກູ້ຢືມ ເງິນຈາກສະຖາບັນການເງິນ ແລະ/ຫລື ການອອກ ແລະຈຳໜ່າຍຮຸ້ນກູ້; ມີລາຍລະອຽດດັ່ງຕໍ່ໄປນີ້:

(1). ພິຈາລະນາ ແລະກຳນົດວົງເງິນທີ່ຈະກູ້ຢືມຈາກສະຖາບັນການເງິນ ແລະ/ຫລື ການອອກ ແລະຈຳ ໜ່າຍຮຸ້ນກູ້, ລາຍລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ່ມເຕີມ, ຕົກລົງ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ຂໍ້ມູນ ຕ່າງໆອັນຈຳເປັນ ແລະກ່ຽວເນື່ອງກັບການກູ້ຢືມຈາກສະຖາບັນການເງິນ ແລະ/ຫລື ການອອກ ແລະຈຳໜ່າຍຮຸ້ນກູ້ ລວມເຖິງແຕ່ບໍ່ຈຳກັດພຽງ ການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍ ງານລັດ ແລະ/ຫຼື ອົງການລັດຕ່າງໆ ທີ່ກ່ຽວຂ້ອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກ ຊັບລາວ ການກະກຽມ, ດັດແກ້, ເພີ່ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງທີ່ຈະຕ້ອງເປີດເຜີຍ ລວມເຖິງການ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ດຳເນີນການໃດໜຶ່ງທີ່ຈຳເປັນ ແລະກ່ຽວເນື່ອງກັບການດຳເນີນການດັ່ງກ່າວໄດ້ທຸກຢ່າງຈົນສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນ ຜູ້ຮັບມອບອຳນາດໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້;

(2). ພິຈາລະນາ ແລະ ກຳນົດລາຍລະອຽດ ແລະເງື່ອນໄຂຕ່າງໆ ທີ່ຈຳເປັນ ຫຼື ກ່ຽວກັບການກູ້ຢືມຈາກສະຖາບັນການເງິນ ແລະ/ຫລື ການອອກ ແລະຈຳໜ່າຍຮຸ້ນກູ້ ດັ່ງກ່າວໄດ້ທຸກປະການ ແລະ/ຫຼື ມີອຳນາດໃນດັດແກ້ ຫຼື ປ່ຽນແປງຂໍ້ມູນໃດໜຶ່ງ ພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເຊັ່ນ: ປະເພດຮຸ້ນກູ້, ໄລຍະເວລາການກູ້ຢືມເງິນ ແລະ/ຫລື ອາຍຸຂອງຮຸ້ນກູ້, ມູນຄ່າການກູ້ຢືມເງິນແລະ/ຫລືມູນຄ່າຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາໃນການອອກ ແລະສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ ລາຍລະອຽດ ການສະເໜີຂາຍ, ລວມເຖິງແຕ່ບໍ່ຈຳກັດພຽງການແຕ່ງຕັ້ງທີ່ປຶກສາ ແລະ ການວ່າຈ້າງຜູ້ຈັດຈຳໜ່າຍ ແລະ ຜູ້ຮັບປະກັນການຂາຍຮຸ້ນ, ການປະຕິບັດ, ການລົງນາມ, ການສົ່ງມອບຄຳຮ້ອງຕ່າງໆ, ສັນຍາ ແລະ/ຫລື ເອກະສານຕ່າງໆ ກັບສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ບຸກຄົນໃດ ທີ່ກ່ຽວຂ້ອງກັບການດຳເນີນການດັ່ງກ່າວໄດ້ທຸກປະການ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມ ພິຈາລະນາອະນຸມັດການກູ້ຢືມເງິນຈາກສະຖາບັນການເງິນ ແລະ/ຫລື ການອອກ ແລະຈຳໜ່າຍຮຸ້ນກູ້ ແລະ ການມອບອຳນາດດັ່ງກ່າວຂ້າງເທິງ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ (80%) ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕຸ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 20/04/2017

ບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 06 ເມສາ 2017 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ບຸນອຸ້ມ ສີວັນເພັງ ຮອງປະທານສະພາບໍລິຫານ ເປັນປະທານກອງປະຊຸມ; ເນື່ອງຈາກ ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ ບໍລິສັດ ຕິດພາລະກິດ ບໍ່ສາມາດເຂົ້າຮ່ວມໄດ້, ຈຶ່ງມອບສິດໃຫ້ແກ່ ທ່ານຮອງ ປະທານສະພາບໍລິຫານດຳເນີນການເປັນປະທານກອງປະຊຸມແທນ. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳ ນວນ 179 ທ່ານ ແລະ ມອບສັນທະຈຳນວນ 420 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 599 ທ່ານ ຖືຮຸ້ນລວມກັນທັງໝົດ 1.494.674.773 ຮຸ້ນ ເທົ່າກັບ 89,005 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳສະມາຊິກສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

1. **ທ່ານ ບຸນອຸ້ມ ສີວັນເພັງ** ຕຳແໜ່ງ: ຮອງປະທານສະພາບໍລິຫານບໍລິສັດ, ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
2. **ທ່ານ ນາງ ລັດຕະນາ ປະທຸມວັນ** ຕຳແໜ່ງ: ກຳມະການສະພາບໍລິຫານ, ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
3. **ທ່ານ ບຸນມາ ມະນີວົງ** ຕຳແໜ່ງ: ກຳມະການສະພາບໍລິຫານ, ຮອງຜູ້ອຳນວຍການໃຫ່ຍ ລັດວິສາຫະກິດໄຟຟ້າລາວ;
4. **ທ່ານ ສີຈາດ ບຸດຊາກິດຕິລາດ** ຕຳແໜ່ງ: ກຳມະການສະພາບໍລິຫານ, ຮອງຫົວໜ້າກົມທຸລະກິດພະລັງງານ ກະຊວງພະລັງງານ ແລະ ບໍ່ແຮ່;
5. **ທ່ານ ຮສ. ປອ. ກອງສີ ແສງມະນີ** ຕຳແໜ່ງ: ກຳມະການອິດສະຫຼະ, ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ;
6. **ທ່ານ ສຈ. ປອ. ຄຳລຶຊາ ນວນສະຫວັນ** ຕຳແໜ່ງ: ກຳມະການອິດສະຫຼະ, ຫົວໜ້າກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ;

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

7. ທ່ານ ธส. ຄຳເຜີຍ ພິມມະຈັນ ຕຳແໜ່ງ: ກຳມະການອິດສະຫຼະ, ຫົວໜ້າຫ້ອງການແຜນການການເງິນ, ມະຫາວິທະຍາໄລແຫ່ງຊາດ;

ອົງປະຊຸມ ມີ 7 ທ່ານ, ຂາດປະຊຸມ 2 ທ່ານ ເນື່ອງຈາກຕິດພາລະກິດ ບໍ່ສາມາດເຂົ້າຮ່ວມກອງປະຊຸມ ໄດ້ ຄື: ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ, ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່; ແລະ ທ່ານ ນາງ ວານິດາ ສະຫວັດດີ ກຳມະການສະພາບໍລິຫານ, ຮອງຫົວໜ້າກົມຮ່ວມມືສາກົນ ກະຊວງການເງິນ.

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຕາງໜ້າຜູ້ກວດສອບບັນຊີພາຍນອກ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມ ແລະ ຄະນະກຳມະການກວດສອບພາຍໃນ ຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ນາງ ລັດຕະນາ ປະທຸມວັນ ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

1. **ການລົງຄະແນນສຽງ:**

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.
  * ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
  * ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍ ໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. **ການນັບຜົນການລົງຄະແນນສຽງ:**

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ອອກສຽງບໍ່ເຫັນດີ ມາຫັກລົບອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ໃນແຕ່ລະວາລະ.

- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງ ຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນ ຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດ ໃຫ້ກອງ ປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນຳເອົາຄະແນນສຽງດັ່ງ ກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ບໍລິສັດໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່າ ນັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ເວລາຕໍ່ມາ, ຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາ

ຜູ້ອຳນວຍການໃຫຍ່ໄດ້ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວຄື:

I. ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2015

1. ກ່ຽວກັບ ວາລະ ທີ 1,2,3,4,5,6,7 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີ ຂອງ ກອງປະຊຸມຜູ້ຖືຮຸ້ນແລ້ວ;
2. ວາລະທີ 8 ພິຈາລະນາ ແລະ ອະນຸມັດການຮັບໂອນບັນດາໂຄງການເຂື່ອນໄຟຟ້າ ຈາກ ຟຟລ ທີ່ນຳໃຊ້ແຫຼ່ງທຶນ ການອອກຮຸ້ນເພີ່ມທຶນ (RO/PO) ຄັ້ງທີ 3; ແລະ ວາລະທີ 9 ພິຈາລະນາ ແລະ ອະນຸມັດການຮັບໂອນບັນດາ ໂຄງການເຂື່ອນໄຟຟ້າ ຈາກ ຟຟລ ທີ່ນຳໃຊ້ແຫຼ່ງທຶນ ຈາກການອອກຮຸ້ນກູ້ສະກຸນເງິນບາດ ຢູ່ ຕະຫຼາດຫຼັກຊັບ ແຫ່ງ ປະເທດໄທ, ຊຶ່ງການຈັດຕັ້ງປະຕິບັດຮອດປະຈຸບັນ ແມ່ນຢູ່ໃນຂັ້ນຕອນກຳລັງດຳເນີນເອກະສານທາງ ດ້ານນິຕິກຳ ກັບພາກສ່ວນທີ່ກ່ຽວຂ້ອງ.

II. ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2016

1. ກ່ຽວກັບວາລະທີ 1, 2, 3, 4 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີ ຂອງ ກອງປະຊຸມແລ້ວ;
2. ວາລະທີ 5 ພິຈາລະນາ ແລະ ອອກຮຸ້ນກູ້ສະກຸນເງິນໂດລາ ປີ 2016.

ປະຈຸບັນ ບັນດາໂຄງການເຂື່ອນໄຟຟ້ານຳໃຊ້ທຶນທີ່ລະດົມຈາກການອອກຮຸ້ນກູ້ສະກຸນເງິນໂດລານັ້ນ ແມ່ນກຳລັງດຳເນີນການຈັດຕັ້ງປະຕິບັດທາງດ້ານນິຕິກຳກັບພາກສ່ວນກ່ຽວຂ້ອງ, ຄາດໝາຍຈະສຳເລັດໃນປີ 2018.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຕໍ່ມາ ປະທານກອງປະຊຸມ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນຊາບວ່າ, ລາຍງານຜົນການຈັດຕັ້ງປະ ຕິບັດມະຕິກອງປະຊຸມດັ່ງກ່າວ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ກອງປະຊຸມໄດ້ຮັບຊາບຕາມການລາຍງານ ຂອງ ຜູ້ອຳນວຍການໃຫຍ່ ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາທຸກປະການ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2016

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2016, ໄດ້ປະຊຸມເມື່ອວັນທີ 12 ສິງຫາ 2016 ໂດຍມີລາຍລະອຽດໃນເອກະສານຄັດຕິດ ເຊິ່ງໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ ແລະ ສະພາບໍລິຫານ ໄດ້ຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ເຫັນດີສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແລະຜູ້ຖືຮຸ້ນ ຊື່: Mr. Kraiwal Kadavanich ໄດ້ສະເໜີ 2 ປະເດັນໃນວາລະນີ້ຄື: (1) ບົດບັນທຶກກອງປະຊຸມຄັ້ງຜ່ານມາກ່ອນປິດການປະຊຸມ ທີ່ທ່ານໄດ້ສະເໜີນັ້ນ ສະເພາະສະບັບພາສາລາວແມ່ນເຫັນວ່າເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ, ສ່ວນພາສາອັງກິດ ເຫັນວ່າເນື້ອໃນບໍ່ຖືກຕ້ອງ ເຖິງວ່າຈະຍຶດຖືສະບັບພາສາລາວເປັນຫຼັກກໍຕາມ; ແລະ ປະເດັນທີ (2) ແມ່ນສືບເນື່ອງຈາກກອງປະຊຸມຄັ້ງຜ່ານມາ ທີ່ກ່ຽວກັບການພິຈາລະນາລົງມະຕິໃນແຕ່ລະວາລະທີ່ຂໍໃຫ້ກອງປະຊຸມບໍ່ສະແດງຄະແນນການລົງມະຕິໃນສ່ວນທີ່ລົງລ່ວງໜ້າ ເນື່ອງຈາກຜູ້ຖືຮຸ້ນທີ່ຈະລົງມະຕິ ລະຫວ່າງ ທີ່ປະທານຂໍໃຫ້ລົງມະຕິ, ເພື່ອໃຫ້ຜູ້ຖືຮຸ້ນມີອິດສະຫຼະອອກຄວາມເຫັນ ວ່າ ເຫັນດີ ຫຼື ບໍ່ເຫັນດີ ຈົນກວ່າຈະຈົບການລົງມະຕິຂອງວາລະນັ້ນ.

ແລະຕໍ່ມາ ຜູ້ອຳນວຍການໃຫຍ່ ໄດ້ຕອບຄຳຖາມແກ່ຜູ້ຖືຮຸ້ນທັງ 2 ປະເດັນ ຄື: 1) ການແປພາສາອັງກິດ ພວກເຮົາຈະນຳໄປດັດແປງໃຫ້ມັນຖືກຕ້ອງ; ແລະ 2) ພິຈາລະນາການລົງຄະແນນພວກເຮົາຈະເອົາໄປປັບປຸງຫຼັງຈາກລົງຄະແນນສຽງທັງໝົດຈຶ່ງໃຫ້ສະແດງຕໍ່ເລກ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ຖາມທີ່ປະຊຸມວ່າ ມີຄຳຖາມຕື່ມບໍ ? ແລະບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ,ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2016 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2016, ວັນທີ 12 ສິງຫາ 2016, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.511.001.857 ສຽງ, ເທົ່າກັບ 99,99 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 1.500 ສຽງ, ເທົ່າກັບ 0,0001 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3. ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2016 (01/01/2016-30/06/2016) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2016

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ອີງຕາມການມອບອຳນາດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ເມື່ອວັນທີ 22 ເມສາ 2013; ການເຄື່ອນໄຫວທຸລະກິດ ຂອງ ບໍລິສັດໃນ 6 ເດືອນຕົ້ນປີ 2016 ມີກຳໄລສຸດທິປະມານ 251,48 ຕື້ກີບ, ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງ ຕະຫຼາດຫຼັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດ.

ບໍລິສັດ ໄດ້ຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2016 ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນທີ່ໄດ້ກຳນົດສິດ ຂອງ ຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **15 ກັນຍາ 2016** ໃນອັດຕາ **130** ກີບຕໍ່ຮຸ້ນ, ລວມເງິນປັນຜົນທີ່ຈ່າຍທັງໝົດປະມານ **218,31** ຕື້ກີບ ແລະ ໄດ້ຈ່າຍເງິນປັນຜົນດັ່ງກ່າວໃຫ້ຜູ້ຖືຮຸ້ນ ໃນວັນທີ **29 ກັນຍາ 2016.**

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2016 ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2016.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2016 ແລະ ຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2016, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາການຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2016 ແລະ ລາຍງານການເງິນ 6 ເດືອນຕົ້ນປີ 2016, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.512.603.757 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2016 ລວມທັງລາຍງານການເງິນຂອງບໍລິສັດ ປີ 2016 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2017.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ກອງປະຊຸມເພື່ອພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2016 ລວມທັງລາຍງານການເງິນ ຂອງ ບໍລິສັດ ປີ 2016 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2017 ຊຶ່ງມີດັ່ງລຸ່ມນີ້:

I. ລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດປີ 2016

ໃນປີ 2016 ການດຳເນີນທຸລະກິດຂອງ ບໍລິສັດ ແມ່ນຜະລິດກະແສໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ (ຟຟລ), ໃນຂະນະດຽວກັນໄດ້ມີການປັບປຸງການຄຸ້ມຄອງບໍລິຫານພາຍໃນບໍລິສັດ ເພື່ອໃຫ້ສອດຄ່ອງກັບກົດລະບຽບ ແລະ ກົດໝາຍຕ່າງໆ ຂອງ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ, ແລະ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ເຂົ້າໄປຖືຮຸ້ນໃນ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ (IPPs) ເຮັດໃຫ້ມີທຶນຈົດທະບຽນ 6.717.214.788.000 ກີບ, ມີຮຸ້ນທັງໝົດ 1.679.303.697 ຮຸ້ນ.

ພ້ອມກັນນັ້ນບໍລິສັດຍັງໄດ້ມອບພັນທະໃຫ້ລັດຖະບານປະມານ 185,53 ຕື້ກີບ ແລະ ໄດ້ເອົາໃຈໃສ່ໃນການພັດທະນາບຸກຄະລາກອນໃຫ້ນັບມື້ນັບເຂັ້ມແຂງ, ອີກດ້ານໜຶ່ງບໍລິສັດໄດ້ໃຫ້ຄວາມສຳຄັນວຽກງານສັງຄົມ ແລະ ສິ່ງແວດລ້ອມ ໂດຍໄດ້ປະກອບສ່ວນເປັນຈຳນວນຫຼາຍສົມຄວນ ພ້ອມທັງໄດ້ສ້າງກິດຈະກຳຮ່ວມກັບຊາວບ້ານອ້ອມຂ້າງເຂື່ອນທີ່ບໍລິສັດຄຸ້ມຄອງ ເປັນຕົ້ນແມ່ນການປູກຕົ້ນໄມ້ ແລະ ປ່ອຍປາ, ມອບອຸປະກອນການສຶກສາ, ອຸປະກອນການແພດໃຫ້ສຸກສາລາ ແລະ ບໍລິຈາກເຄື່ອງນຸ່ງຫົ່ມປະຊາຊົນອ້ອມຂ້າງເຂື່ອນ, ລວມເປັນເງິນທັງໝົດປະມານ 1,42 ຕື້ກີບ, ມີລາຍລະອຽດໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ການດຳເນີນທຸລະກິດ ໃນປີ 2016 ບໍລິສັດມີກຳໄລສຸດທິທັງໝົດປະມານ 554,35 ຕື້ກີບ; ລາຍງານການເງິນຂອງບໍລິສັດປີ 2016 ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ກວດສອບແລ້ວ, ມີລາຍລະອຽດໃນໜັງສືແຈ້ງເຊີນ ແລະໄດ້ເປີດເຜີຍໃນເວັບໄຊທ໌ ຂອງ ຕະຫຼາດຫຼັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດແລ້ວ.

ໃນປີ 2017, ໂດຍອີງຕາມນະໂຍບາຍອັນຊັດເຈນ ຂອງ ບໍລິສັດ ໃນການຕອບສະໜອງເງິນປັນຜົນຢ່າງສົມເຫດສົມຜົນໃຫ້ຜູ້ຖືຮຸ້ນ ພ້ອມທັງເຮັດໃຫ້ການດຳເນີນທຸລະກິດການຜະລິດກະແສໄຟຟ້າມີຄວາມໝັ້ນຄົງຢ່າງຕໍ່ເນື່ອງ, ບໍລິສັດໄດ້ສືບຕໍ່ວາງແຜນການດຳເນີນທຸລະກິດດ້ວຍຕົວເລກຄາດໝາຍທີ່ອາດມີຄວາມເປັນໄປໄດ້ໃນເບື້ອງລາຍຮັບ ແລະໄດ້ວາງຕົວເລກຄາດໝາຍຢ່າງຮັດກຸມໃນເບື້ອງລາຍຈ່າຍ. ບໍລິສັດ ມີແຜນຈະສືບຕໍ່ລົງທຶນໃນບັນດາເຂື່ອນໄຟຟ້າຕ່າງໆ ເຊັ່ນ:

1). ໂຄງການທີ່ລັດວິສາຫະກິດໄຟຟ້າລາວລົງທຶນ.

2). ໂຄງການທີ່ລັດວິສາຫະກິດໄຟຟ້າລາວເຂົ້າຖືຮຸ້ນ

3). ໂຄງການທີ່ບໍລິສັດມີແຜນຈະລົງທຶນ ແລະ ເຂົ້າຮ່ວມທຶນກັບຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ.

ລາຍລະອຽດໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບໃນເວັບໄຊທ໌ ຂອງ ຕະຫຼາດຫຼັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດແລ້ວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ທ່ານປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2016 ລວມທັງລາຍງານການເງິນ ຂອງ ບໍລິສັດປີ 2016 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2017 ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2016 ລວມທັງລາຍງານການເງິນຂອງບໍລິສັດ ປີ 2016 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2017, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.512.627.557 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2016 (01/07/2016-31/12/2016).

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມເພື່ອພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2016 (01/07/2016-31/12/2016) ອີງຕາມກົດລະບຽບ ຂອງ ບໍລິສັດ, ບໍລິ ສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫຼັງຫັກເປັນຄັງ ສຳ ຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບ ເສດຖະ ກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດ ມີກຳໄລສຸດທິຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2016 ເປັນເງິນຈຳນວນທັງໝົດ **302,87** ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະ ກິດຂອງບໍລິສັດ 6 ເດືອນທ້າຍປີ 2016 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ, ຄັງສຳຮອງເພື່ອການສ້ອມ ແປງເຄື່ອນ ແລະ ເພື່ອຂະຫຍາຍທຸລະກິດ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນວັນທີປິດປຶ້ມບັນຊີຜູ້ຖື ຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **12 ເມສາ 2017** ໃນອັດຕາ **160** ກີບຕໍ່ຮຸ້ນ, ລວມ ເປັນເງິນປັນຜົນຈ່າຍທັງໝົດ **268,69** ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **28 ເມສາ 2017.**

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2016 ດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 5 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານ ໃດມີຄຳຖາມແຕ່ຢ່າງໃດ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການຈ່າຍເງິນ ປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2016, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະ ແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການຈ່າຍເງິນປັນຜົນຈາກ ຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2016 (01/07/2016-31/12/2016) ພາຍຫຼັງ ການຫັກເປັນຄັງສຳຮອງຕາມລະບຽບການ ແລະຄັງສຳຮອງອື່ນໆ, ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ ຮັບເງິນປັນຜົນ ໃນວັນທີ 12 ເມສາ 2017 ໃນອັດຕາຮຸ້ນລະ 160 ກີບ, ລວມເປັນເງິນປັນ ຜົນຈ່າຍທັງໝົດ 268,69 ຕື້ກີບ ແລະກຳນົດຈ່າຍເງິນປັນຜົນໃນວັນທີ 28 ເມສາ 2017. ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມ ກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.512.627.557 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງ ໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 6. **ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ ກວດສອບບັນຊີພາຍນອກ ປີ 2017.**

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2017 ໂດຍ ບໍລິສັດ ສະເໜີແຕ່ງຕັ້ງຜູ້ກວດສອບບັນຊີຄື: ບໍລິສັດ Klynveld Peat Marwick Goerdeler (KPMG) ເປັນຜູ້ກວດສອບບັນຊີພາຍນອກ ຂອງບໍລິສັດ ສຳລັບປີ 2017, ເນື່ອງຈາກວ່າ ບໍລິສັດ KPMG ໄດ້ມີຜົນງານການກວດສອບບັນຊີໃຫ້ບໍລິສັດ ໃນປີ 2016 ຜ່ານມາເຫັນວ່າການປະຕິບັດວຽກງານແລະການປະສານງານຂອງບໍລິສັດດັ່ງກ່າວ ແມ່ນຢູ່ໃນລະດັບດີສົມຄວນ, ຜູ້ກວດສອບບັນຊີ ແລະ ທີມງານມີຄວາມເຂົ້າໃຈແຈ້ງໃນໜ້າທີ່ ໃນຖານະທີ່ເປັນຜູ້ກວດສອບບັນຊີອິດສະຫຼະ ມີຄວາມລະອຽດຮອບຄອບໃນການທົບທວນ ແລະ ການກວດສອບບັນຊີ ຂອງ ບໍລິສັດ ແລະ ປະຕິບັດວຽກງານແມ່ນສຳເລັດທັນເວລາຕາມທີ່ລະບຽບຕ່າງໆໄດ້ກຳກົດໄວ້; ໂດຍຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກສຳລັບປີ 2017 ເປັນເງິນຈຳນວນ **93.500** ໂດລາສະຫະລັດ (ມີລາຍລະອຽດໃນໜັງສືແຈ້ງເຊີນທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ).

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງ ຜູ້ກວດສອບບັນຊີພາຍນອກ ດັ່ງກ່າວ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງ ຜູ້ກວດສອບບັນຊີພາຍນອກ ປີ 2017, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄືບໍລິສັດ Klynveld Peat Marwick Goerdeler (KPMG) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດສຳລັບປີ 2017, ໂດຍຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກສຳລັບປີ 2017 ເປັນຈຳນວນເງິນ 93.500 ໂດລາສະຫະລັດ, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.512.623.457 ສຽງ, ເທົ່າກັບ 99,99 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 4.100 ສຽງ, ເທົ່າກັບ 0,00027 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 7. ພິຈາລະນາ ແລະ ອະນຸມັດການລົງທຶນໃນໂຄງການເຂື່ອນໄຟຟ້ານ້ຳຊັນ 3A ແລະເຂື່ອນໄຟຟ້ານ້ຳຊັນ 3B

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເພື່ອສືບຕໍ່ຂະຫຍາຍການລົງທຶນ ແລະ ການດຳເນີນທຸລະກິດຂອງ ບໍລິສັດ ແນໃສ່ສ້າງຄວາມຮັ່ງມີໃຫ້ແກ່ຜູ້ຖືຮຸ້ນຢ່າງຕໍ່ເນື່ອງ ແລະ ນັບມື້ນັບເພີ່ມຂຶ້ນ, ບໍລິສັດ ສະເໜີກອງປະຊຸມພິຈາ ລະນາ ມູນຄ່າການລົງທຶນໃນ 2 ໂຄງການດັ່ງກ່າວ ຄື: ເຂື່ອນໄຟຟ້ານ້ຳຊັນ 3A ຕັ້ງຢູ່ເມືອງຄຸມ, ແຂວງ ຊຽງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຂວາງ, ມີກຳລັງຕິດຕັ້ງ 69 MW, ການຜະລິດໄຟຟ້າສະເລ່ຍ 278 GWh, Plant Factor 46%, ຄວາມຄືບໜ້າ ຂອງໂຄງການສຳເລັດ 100%, ເລີ່ມການຜະລິດຢ່າງເປັນທາງການແຕ່ເດືອນ 01/2016 ແລະ ໂຄງການເຂື່ອນໄຟຟ້ານ້ຳ ຊັນ 3B ແມ່ນຕັ້ງຢູ່ເມືອງທ່າໂທມ, ແຂວງໄຊສົມບູນ, ກຳລັງຕິດຕັ້ງ 45 MW, ການຜະລິດໄຟຟ້າສະເລ່ຍ 174 GWh, Plant Factor 44%, ຄວາມຄືບໜ້າໂຄງການສຳເລັດ 100%, ເລີ່ມການຜະລິດຢ່າງເປັນທາງການ ແຕ່ເດືອນ 09/2015.

ລວມມູນຄ່າການລົງທຶນທັງສອງ (2) ໂຄງການເຂື່ອນໄຟຟ້າດັ່ງກ່າວ, ບໍລິສັດ ຈະຊຳລະເປັນເງິນສົດປະ ມານ 107 ລ້ານໂດລາສະຫະລັດ, ນອກຈາກນັ້ນ ບໍລິສັດ ຍັງຈະໄດ້ຮັບຜິດຊອບໃນການຊຳລະຕົ້ນທຶນ ແລະ ດອກເບ້ຍ ເງິນກູ້ຂອງໂຄງການນຳອີກ.

ແລະ ມອບອຳນາດໃຫ້ສະພາບໍລິຫານ ຂອງ ບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນ ດັ່ງກ່າວ ເປັນຜູ້ມີອຳນາດໃນການຕິດຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ລາຄາຊື້ຂາຍ ແລະ ລາຍລະອຽດທີ່ກ່ຽວຂ້ອງ, ດັດ ແກ້, ເພີ້ມເຕີມ, ຕີກລົງ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການເຂົ້າຊື້ຊັບສິນດັ່ງກ່າວ ຂ້າງເທິງນີ້ ກັບ ກຸ່ມບໍລິສັດ ຟົງຊັບທະວີ ຈຳກັດຜູ້ດຽວ ແລະ/ຫຼື ບຸກຄົນທີ່ກ່ຽວຂ້ອງກັບການເຂົ້າຊື້ຊັບສິນດັ່ງກ່າວ, ຊຶ່ງ ລວມເຖິງແຕ່ບໍ່ຈຳກັດພຽງສັນຍາໂອນຊັບສິນ ລວມເຖິງແຕ່ບໍ່ຈຳກັດພຽງການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການ ຕິດ ຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວ ຂ້ອງ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດການກະກຽມ, ດັດແກ້, ເພີ້ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ ກ່ຽວ ຂ້ອງທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການ ດັ່ງກ່າວໄດ້ທຸກຢ່າງຈົນສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອຳນາດຕໍ່ໃນການ ດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້ທຸກປະການ.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ອະນຸມັດ ການລົງທຶນໃນ 2 ໂຄງການດັ່ງກ່າວຂ້າງເທິງ ແລະ ການມອບອຳນາດໃຫ້ສະພາບໍລິຫານຕາມທີ່ໄດ້ສະເໜີດັ່ງກ່າວຂ້າງເທິງ ທຸກປະການ.

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍແປດ ສິບ
ສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານ ໃດມີຄຳຖາມ.

ເວລາຕໍ່ມາ ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການລົງທຶນໃນ 2 ໂຄງການເຂື່ອນໄຟຟ້າຄື: ໂຄງການເຂື່ອນໄຟຟ້ານ້ຳຊັນ 3A ແລະ ເຂື່ອນໄຟຟ້ານ້ຳຊັນ 3B, ແລະການມອບອຳນາດ ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ ຖອກແລ້ວທັງໝົດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການລົງທຶນໃນໂຄງການເຂື່ອນໄຟຟ້ານ້ຳຊັນ 3A ແລະເຂື່ອນໄຟຟ້ານ້ຳຊັນ 3B, ໂດຍບໍລິສັດຈະຊຳລະເປັນຈຳນວນເງິນສົດ ລວມທັງໝົດປະມານ 107.000.000 ໂດລາສະຫະລັດ ແລະນອກຈາກນັ້ນ, ບໍລິສັດ ຍັງຈະໄດ້ຮັບຜິດຊອບໃນການຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ຂອງໂຄງການນຳອີກ. ແລະ ມອບອຳນາດໃຫ້ສະພາບໍລິຫານ ຂອງ ບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການຕົກລົງ, ເຈລະຈາ, ກຳນົດເງື່ອນໄຂ, ລາຄາຊື້ຂາຍ ແລະ ລາຍລະອຽດທີ່ກ່ຽວຂ້ອງ, ດັດ ແກ້, ເພີ້ມເຕີມ, ຕີກລົງ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການເຂົ້າຊື້ຊັບສິນດັ່ງກ່າວຂ້າງເທິງນີ້ ກັບ ກຸ່ມບໍລິສັດ ພິງ ຊັບທະວີ ຈຳກັດຜູ້ດຽວ ແລະ/ຫຼື ບຸກຄົນທີ່ກ່ຽວຂ້ອງກັບການເຂົ້າຊື້ຊັບສິນດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາໂອນຊັບສິນ ລວມເຖິງແຕ່ບໍ່ຈຳກັດພຽງການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດການກະກຽມ, ດັດແກ້, ເພີ້ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງທີ່ຈະຕ້ອງເປີດ ເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳ ເນີນການດັ່ງກ່າວໄດ້ທຸກຢ່າງຈົນສຳເລັດ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນຜູ້ຮັບມອບອຳນາດຕໍ່ໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້ທຸກປະການ, ກອງປະຊຸມໄດ້ອະນຸມັດດ້ວຍຄະແນນສຽງດັ່ງນີ້:

(ກ) ຈຳນວນຄົນ (ສຽງ) ຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີຈຳນວນ 606 ຄົນ (ສຽງ), ເທົ່າກັບ 99,51 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີຈຳນວນ 3 ຄົນ (ສຽງ), ເທົ່າກັບ 0,49 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 1.152.537.257 ຮຸ້ນ (ສຽງ), ເທົ່າກັບ 90,06 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.
2. ບໍ່ເຫັນດີ 90.300 ຮຸ້ນ (ສຽງ), ເທົ່າກັບ 0,00538 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຖືວ່າໄດ້ພິຈາລະນາຄົບອາລະການປະຊຸມແລ້ວ, ແລະປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄຳຄິດຄຳເຫັນຕື່ມ, ແລະ ຜູ້ຖືຮຸ້ນ ຊື່ Mr. Kraiwal Kadavanich ໃນຖານະຕົວແທນສະມາຄົມຜູ້ຖືຮຸ້ນ ໄດ້ສະແດງຄວາມຂອບໃຈບໍລິສັດ ທີ່ໄດ້ພິຈາລະນາຄຳແນະນຳໄປປັບປຸງແກ້ໄຂທັນທີ, ສະແດງໃຫ້ເຫັນວ່າ ບໍລິສັດເລັ່ງເຫັນການພັດທະນາຕາມຫຼັກຂອງການກຳກັບກິດຈະການທີ່ດີ ແລະ ຈາກຜົນການດຳເນີນງານເຊື່ອວ່າ ບໍລິສັດຈະນຳພາຄວາມຈະເລີນ ຮຸ່ງເຮືອງມາໃຫ້ແກ່ຜູ້ຖືຮຸ້ນ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມຮອດເວລາປິດກອງປະຊຸມ, ມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 192

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 422 ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 614 ຄົນ ຖືຮຸ້ນລວມກັນ 1.513.148.457 ຮຸ້ນ ລວມກັນທັງໝົດເທົ່າກັບ 90.10 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ແລະຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນທຸກທ່ານ ທີ່ໄດ້ມາຮ່ວມກອງປະຊຸມ ແລະ ຂໍເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໃນຕົ້ນປີ 2018 ແລະ ອວຍພອນໄຊ ບັນດາທ່ານສະພາບໍລິຫານບໍລິສັດ, ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ອວຍພອນໄຊຜູ້ຖືຮຸ້ນທຸກທ່ານ ແລະ ແຂກທີ່ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ປະທານກອງປະຊຸມ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ບຸນອຸ້ມ ສີວັນເພັງ

ຮັບຮອງຖືກຕ້ອງ

ລັດຕະນາ ປະທຸມວັນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ໃບມອບສັນທະ
PROXY

ຂຽນທີ່ .....
Written at

ວັນທີ ..... ເດືອນ ..... ປີ .....
Date Month Year

(1)ຂ້າພະເຈົ້າ ..... ສັນຊາດ ..... ວັນທີ, ເດືອນ ແລະ ປີເກີດ .....
I/We Nationality date, month and year of birth

-ບັດປະຈຳຕົວເລກທີ ..... ຢູ່ເຮືອນເລກທີ ..... ບ້ານ ..... ຖະໜົນ .....
ID card number Reside at Village Road

ເມືອງ ..... ແຂວງ .....
District Province

(2)ເປັນຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
Being a shareholder of EDL-Generation Public Company.

-ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ ..... ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.
holding the ordinary shares in the total amount of shares, which are equivalent to the same number of votes.

(3)ຂໍມອບໝາຍໃຫ້
Hereby appoint

☐(1)ທ່ານ/ທ່ານນາງ ..... ອາຍຸ ..... ປີ, ຢູ່ເຮືອນເລກທີ .....
Mr./Ms. age years, reside at

ຖະໜົນ ..... ບ້ານ ..... ເມືອງ .....
Road Village District

-ແຂວງ ..... ລະຫັດໄປສະນີ ..... ຫຼື
Province Postal Code or

☐(2)ທ່ານ ສຈ. ປອ. ຄຳລືຊາ ນວນສະຫວັນ ..... ອາຍຸ 62 ປີ, ຢູ່ເຮືອນເລກທີ 44
Prof. Dr. Khamlusa NOUANSAVAHN age 62 years, resides at 44

ຖະໜົນ ດົງປ່າແຫຼບ ..... ບ້ານ ດົງປ່າແຫຼບ ..... ເມືອງ ຈັນທະບູລີ .....
Road Dongpalap Village Dongpalap District Chanthabouly

ແຂວງ ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ 2392 ..... ຫຼື
Province Vientiane Capital Postal Code 2392 or

☐(3)ທ່ານ ຣສ. ປອ. ກອງສີ ແສງມະນີ ..... ອາຍຸ 63 ປີ, ຢູ່ເຮືອນເລກທີ 645
Assoc Prof. Dr. Kongsy SENGMANY age 63 years, resides at 645

ຖະໜົນ ໂພນຕ້ອງ ..... ບ້ານ ໂພນຕ້ອງຈອມມະນີ ..... ເມືອງຈັນທະບູລີ .....
Road Phontong Village Phontongchommani District Chathabouly

ແຂວງ ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ 2392 ..... ຫຼື
Province Vientiane Capital Postal Code 2392 or

☐(4)ທ່ານ ຣສ. ຄຳເພັຍ ພົມມະຈັນ ..... ອາຍຸ 54 ..... ປີ, ຢູ່ເຮືອນເລກທີ 074
Assoc. Prof. Khampheui PHOMMACHANH age 54 years, resides at 074

ຖະໜົນດົງໂດກ ..... ບ້ານ ດົງໂດກ ..... ເມືອງ ໄຊທານີ .....
Road Dongdok Village Dongdok District Xaythany

ແຂວງ ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ 2392 .....
Vientiane Capital Postal Code 2392

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017 ໃນວັນທີ 25 ຕຸລາ 2017 ເວລາ 15:00 ໂມງ

Any one of them to be my/our proxy to attend and vote on my/our behalf at the Extraordinary General Meeting for the Year 1/2017 to be on 25 October 2017 at 3:00 pm.

ສະຖານທີ່ຫ້ອງປະຊຸມ ຊັ້ນທີ 1 ອາຄານສຳນັກງານ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ຫຼື ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

At meeting room, 1st floor, EDL Headquarter building, Lao-Thai Friendship Road, Thongkang Village, Sisattanak District, Vientiane Capital or any adjournment at any date, time and place thereof.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຄັ້ງນີ້ດັ່ງນີ້:

I/We hereby authorize the proxy to vote on my/our behalf at this meeting as follows:

☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;
To grant my/our proxy to consider and vote on my/our behalf as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າແລະມີສິດພິຈາລະນາແລະລົງມະຕິແທນຂ້າພະເຈົ້າໃນບາງວາລະ;
To grant my/our proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.
To grant my/our proxy to vote as per my/our intention

ວາລະທີ 1: **ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016.**

Agenda No. 1 **To consider and adopt the Minutes of Annual General Shareholders' Meeting for the year 2016.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 2: ພິຈາລະນາ ແລະອະນຸມັດການຮັບໂອນຮຸ້ນສາມັນ 20 ສ່ວນຮ້ອຍ ຂອງບໍລິສັດໄຟຟ້າດອນສະໂຮງ ຈຳກັດ ແລະ ຮຸ້ນສາມັນ 20 ສ່ວນຮ້ອຍ ຂອງ ບໍລິສັດໄຊຍະບຸລີ ພາວເວີ ຈຳກັດ, ໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ຈາກລັດວິສາຫະກິດໄຟຟ້າລາວ.

Agenda No. 2 To consider and approve common share 20 percent of the ordinary shares purchase of Don Sahong Power Company Limited and 20 percent of the ordinary shares purchase of Xayaburi Power Company Limited, in Independent Power Producers (IPPs) from EDL.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 3: ພິຈາລະນາ ແລະອະນຸມັດ ການຊອກຫາແຫລ່ງທຶນ ເພື່ອຊື້ຮຸ້ນໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ຈາກລັດວິສາຫະກິດໄຟຟ້າລາວ.

Agenda No.3 To consider and approve the capital sources to purchase the ordinary shares in Independent Power Producers (IPPs).

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າ ໃນຖານະຜູ້ຖືຮຸ້ນ.

Voting of the proxy in any agenda that is not as specified in this Proxy shall be considered as invalid and shall not be my/our voting as a shareholder.

(6) ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະປະຊຸມໃດໄວ້ ຫຼື ລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າເຫັນດີ.

In case I/we have not specified my/our voting intention in any agenda or not clearly specified, it shall be deemed approved.

ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງ ຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກຢ່າງ.

Any business carried out by the proxy at the said meeting, except in case that the proxy does not vote according to my/our intention(s) specified in the Proxy, shall be deemed as having been carried out by myself/ourselves in all respects.

ລົງລາຍເຊັ້ນ/Signed ຜູ້ຖືຮຸ້ນທີ່ມອບໝາຍ/Grantor

(.....)

ລົງລາຍເຊັ້ນ/Signed ຜູ້ຕາງໜ້າ/Proxy

(.....)

ໝາຍເຫດ

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງຜູ້ດຽວເປັນຜູ້ເຂົ້າຮ່ວມປະຊຸມແລະລົງຄະແນນສຽງ, ແລະບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍຄົນເພື່ອແຍກການລົງຄະແນນສຽງໄດ້.

   The shareholder appointing the proxy must authorize only one proxy to attend and vote at the meeting and may not split the number of shares to several proxies for splitting votes.

2. ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009, ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍແລະຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ, ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆໃນກໍລະນີທີ່ໃບມອບສັນທະສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

   Pursuant to the Law on Notary (Amended) No. 11/NA, dated 26 November 2009, in order for the appointment by the shareholder to the proxy to have legal effect, this Proxy must be registered with the court. In this regard, the Company will not take any responsibility in the case where the Proxy submitted to the Company has not been registered with the court.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ, ໃບແຈ້ງສິດ ແລະໃບມອບສັນທະມາພ້ອມ.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.</u>

1. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງໃຊ້ໃນການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ

1.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

1.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ
ໃຫ້ສະແດງເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 1.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ.

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 <u>ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ</u>

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນ ຂອງ ນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(3) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້ 1.2.1 (1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື 1.2.2 ແລ້ວແຕ່ກໍລະນີ.

(2) ເອກະສານ ຂອງ ນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວ ລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

2.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫລະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ກຳມະການອິດສະຫລະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວ ໃຫ້ເປັນຜູ້ຮັບມອບໝາຍ ໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

2.2 ນຳສົ່ງໃບມອບສັນທະຄືນ ພະແນກເລຂານຸການບໍລິສັດ ກ່ອນວັນທີ **25 ຕຸລາ 2017** ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍໜຶ່ງຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ້ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017 ຂອງ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ ກ່ອນເປີດກອງປະຊຸມ 13:30 ໂມງ ຫຼື ຕັ້ງແຕ່ເວລາ 13:30-15:00 ໂມງ ເປັນຕົ້ນໄປ ໃນວັນທີ **25 ຕຸລາ 2017** ທີ່ຫ້ອງປະຊຸມຊັ້ນ 1 ອາຄານສຳນັກງານລັດວິສາຫະກິດໄຟຟ້າລາວ ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ ຕາມແຜນທີ່ທີ່ຄັດຕິດມາພ້ອມ.

ໃນນີ້, ໃນແຕ່ລະວາລະປະຊຸມ ກ່ອນເລີ້ມການລົງຄະແນນ ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດແລ້ວ.

4. ການລົງຄະແນນສຽງໃນກອງປະຊຸມວິສາມັນຜູ້ຖືຮຸ້ນ

4.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ບໍລິສັດ ຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳຫຼັບທຸກໆ ວາລະປະຊຸມ ທີ່ຕ້ອງມີການລົງຄະແນນສຽງ ໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນ ໃນເວລາທີ່ລົງທະບຽນ, <u>**ຍົກເວັ້ນ**</u> ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະວາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ</u>

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາ ຂອງ ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼືບໍ່ ຜູ້ທີ່ເຫັນດີບໍ່ຕ້ອງການເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ການເຄື່ອງໝາຍ (✓) ລົງໃນຊ່ອງ □ ບໍ່ເຫັນດີໃນບັດລົງຄະແນນ ພ້ອມລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນ ເພື່ອສົ່ງມອບໃຫ້ແກ່ເຈົ້າໜ້າທີ່ຂອງບໍລິສັດ ເພື່ອນຳໄປກວດນັບ, ຍົກເວັ້ນ ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາ ຜູ້ທີ່ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຊາບຜົນການລົງຄະແນນສຽງ ໃນແຕ່ລະວາລະປະຊຸມສິ້ນສຸດລົງແລ້ວ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມາລວມ ເປັນຄະແນນສຽງອີກ.

4.3 <u>ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ</u>

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕ.ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la


ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ້ມວາລະປະຊຸມ ໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕ.ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ແຜນທີ່ ຂອງສະຖານທີ່ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2017

Map of the Meeting Place



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la